# ເປັນຫຍັງກຸ້ງຈຶ່ງຫຼັງກົ່ງ ?

ແຕ່ກ່ອນຢູ່ເມືອງໜອງແສຍັງມີຮຸ້ງ ໂຕໃຫຍ່ອີຫຼີ ຈົນບໍ່ມີສັດປີກຊະນິດໃດປຣາບປາມໄດ້ເລີຍ. ມື້ນຶ່ງ ມັນບິນໄປອິເຊະ ເພື່ອຈຳສິນພາວະນາ. ການເດີນທາງຕ້ອງໄດ້ຂ້າມມະຫາສມຸດອັນໃຫຍ່ໄພສານ ຈຶ່ງຈະເຖິງຈຸດທີ່ໝາຍ. ມັນບິນໄປໝົດມື້, ຕົກຄ່ຳມາກໍຫາບ່ອນນອນ ; ຂນະນັ້ນມີໄມ້ລຳນຶ່ງພົ້ນຂຶ້ນມາຈາກມະຫາສມຸດຮຸ້ງກໍເລີຍເຂົ້າໄປຈັບນອນ. ຕື່ນເຊົ້າມາແຕ່ເດິກມັນກໍອອກເດີນທາງອີກ. ຮອດຄ່ຳມາກໍພົບໄມ້ລຳນຶ່ງພົ້ນຂຶ້ນມາຈາກມະຫາສມຸດອີກ. ຮຸ້ງຈຶ່ງເຂົ້າໄປຈັບເພື່ອຄ້າງຄືນ, ຄາວນີ້ງມັນໄດ້ຍິນສຽງພຶມພຳອອກມາຈາກພື້ນນ້ຳວ່າ :

-ດຣມໝວດກູເດ້ ! ແມ່ນໃຜບັງອາດລົບກວນການພັກຜ່ອນຂອງກູ ! ຮຸ້ງຈຶ່ງຕົກໃຈເລີຍຕອບວ່າ :

- ແມ່ນກູເອງເປັນຮຸ້ງໃຫຍ່ ຜູ່ເປັນເຈົ້າແຫ່ງເວຫາຜາຊົນທັງຫຼາຍ.

- ໂອ ! ມຶງດອກຫວ໋າ ! ຜູ່ຈະໄປອິເຊະຫັ້ນຕີ໊ ? ຮູ້ໄວ້ເດີ້ວ່າມື້ແລງວານນີ້ມຶງໄດ້ມານອນຢູ່ໜວດເບື້ອງຊ້າຍຂອງກູ, ແລ້ວມື້ນີ້ໄດ້ມາຈັບໜວດເບື້ອງຂວາຂອງກູ. ເບິ່ງແມ້ມຶງບິນແຕ່ເບື້ອງຊ້າຍຫາເບື້ອງຂວາຂອງກູຈົນໝົດມື້ພຸ້ນນ່າ !

- ອີຫຼີຫວະ ? ຮຸ້ງຖາມດ້ວຍຄວາມປລາດໃຈ.

- ກໍແມ່ນລະຕີ໊ , ກູເປັນພຍາກຸ້ງໃຫຍ່ກວ່າເພິ່ນໃນບັນດາໝູ່ກຸ້ງທັງຫຼາຍຢູ່ມະຫາສມຸດນີ້. ຮຸ້ງກໍຮູ້ສຶກເສັຽໃຈທີ່ຕົນມີຈຸດອ່ອນກວ່າກຸ້ງ ຈຶ່ງຕັດສິນໃຈເຊົາການເດີນທາງ.

ສ່ວນກຸ້ງເອງກໍເດີນທາງໄປອິເຊະເພື່ອຈຳສິນກັນ. ຮອດຕອນກາງຄືນມາມັນເລີຍເຂົ້າໄປນອນໃນຮູມືດໆຮູນຶ່ງ. ຕື່ນມາກໍເດີນທາງຕໍ່ໄປຈົນຄ່ຳຈຶ່ງເຂົ້າໄປຫຼົ້ນນອນຢູ່ຮູມືດໆອີກຮູນຶ່ງ, ຄາວນີ້ມັນໄດ້ຍິນສຽງຈົ່ມອອກມາວ່າ :

- ເຂົ້າມາໃນຮູດັງກູອີກແລ້ວເດ !

ກຸ້ງເວົ້າອອກມາດ້ວຍຄວາມຕົກໃຈວ່າ :

- ແມ່ນຮູດັງຫວະນີ້ ? ມຶງແມ່ນໃ ຜ ?

- ກູແມ່ນພຍາປາຝາໄລ, ມື້ແລງວານນີ້ມຶງມານອນໃນຮູດັງເບື້ອງຊ້າຍຂອງກູ. ມື້ນີ້ມານອນໃນຮູດັງເບື້ອງຂວາຂອງກູ ເຮັດໃຫ້ກູດຣມມຶງຈ່ອງອອກໄປ !

ເວົ້າສຸດຄວາມປາຝາໄລເລີຍທັ່ງດັງ ຝຶດ ບາດນຶ່ງ, ເຮັດໃຫ້ກຸ້ງປິວໄປ ຫຼັງຂອງມັນເລີຍກະທົບໃສ່ໂງ່ນຫີນ. ແຕ່ບັດນັ້ນມາຫຼັງຂອງກຸ້ງຈຶ່ງກົ່ງຈົນເທົ້າທຸກວັນນີ້.